ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 00729 / ກພສ.

ນະຄອນຫຼວງວຽງຈັນ, ວັນທີ 12 FEB 2018

## ແຈ້ງການເພີ່ມເຕີມ

ເຖິງ : ທ່ານຫົວໜ້າພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ , ກອງກວດກາປະຈຳແຂວງ ແລະ ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ,

ເລື່ອງ : ການອອກເອກະສານເຄື່ອນຍ້າຍສິນຄ້າຖ້ຳປະກັນ (ສຳລັບນ້ຳມັນເຊື້ອໄຟ).

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ແຈ້ງການ ສະບັບເລກທີ 4698/ກພສ, ລົງວັນທີ 05 ມິນາ 2012.

ກົມພາສີ ອອກແຈ້ງການ ຄື:

1. ມອບໃຫ້ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີທົ່ວປະເທດ ຊີ້ນຳກອງກວດກາ ແລະ ດ່ານພາສີຊາຍແດນ ເອົາໃຈໃສ່ທົບທວນຄືນເນື້ອໃນໃນແຈ້ງການ ສະບັບເລກທີ 4698/ກພສ, ລົງວັນທີ 05 ມີນາ 2012 ກ່ຽວກັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າໃນຮູບການໃດທີ່ຈຳເປັນ ແລະ ບໍ່ຈຳເປັນຕ້ອງຂໍອະນຸຍາດອອກເອກະສານເຄື່ອນຍ້າຍພາຍໃນ ແລະ ນຳໃຊ້ສາຍລ໋ອກ ຫຼື ໜີບກ່ວາເຂົ້າໃນການຄຸ້ມຄອງ;
2. ສຳລັບສິນຄ້າປະເພດນ້ຳມັນເຊື້ອໄຟ ພາຍຫຼັງທີ່ໄດ້ປະກອບໃບແຈ້ງພາສີເປັນລາຍລະອຽດ ແລະ ໄດ້ເສຍພາສີຖືກຕ້ອງຄົບຖ້ວນແລ້ວ ໃນເວລາມີການເຄື່ອນຍ້າຍຈາກແຂວງໜຶ່ງໄປຫາແຂວງໜຶ່ງ ໃຫ້ນຳໃຊ້ໃບແຈ້ງພາສີເປັນລາຍລະອຽດແທນໃບເຄື່ອນຍ້າຍສິນຄ້າ (ຖ້ານຳໃຊ້ໃບສຳເນົາໃຫ້ມີກາຈ້ຳ ແລະ ລາຍເຊັນຢັ້ງຢືນຄວາມຖືກຕ້ອງຈາກບໍລິສັດ ຫຼື ເຈົ້າຂອງສິນຄ້າ);
3. ໃນກໍລະນີການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ບໍ່ໄດ້ນຳໄປໝົດຕາມຈຳນວນໃບແຈ້ງພາສີເປັນລາຍລະອຽດສະບັບຕົ້ນ (ໝາຍຄວາມວ່ານຳເອົາສິນຄ້າ, ເຄື່ອງຂອງ ໄປສ່ວນໃດສ່ວນໜຶ່ງ) ແມ່ນໃຫ້ມີໃບບິນຊື້-ຂາຍຂອງຂະແໜງສ່ວຍສາອາກອນຄັດຕິດໄປພ້ອມ ເພື່ອເປັນພື້ນຖານ ແລະ ເປັນບ່ອນອີງໃນການກວດກາ;
4. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາຫຍຸ້ງຍາກໃຫ້ລາຍງານກົມພາສີ ເພື່ອມີວິທີແກ້ໄຂຕາມກົດໝາຍ ແລະ ລະບຽບການກຳນົດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ກະຊວງການເງິນ
ກົມພາສີ

ບຸນປະເສີດ ສີກຸນລະບຸດ